# ການສຶກສາຄວາມພໍໃຈຈ່າຍໃນການກຳຈັດຂີ້ເຫຍື່ອ ແລະ ສິ່ງເສດເຫລືອ ຂອງຄົວເຮືອນທີ່ອາໃສຢູ່ເຂດເທດສະບານ ເມືອງ ປາກເຊ, ແຂວງ ຈຳປາສັກ

# Study the willingness to pay of improving rubbish management in Pakxe city, Champasak Province.

ສີອຳພອນ ພົມມະທຳ[1]  ແສງສຸລິໄຊ ສີຂານທອງ[2]  ສະຫລອງໄຊ ຟອງສະໝຸດ[3]  ທະນູສິນ ອິນທະປັນຍາ[4]

## ບົດຄັດຫຍໍ້

ໃນການສຶກສາຄັ້ງນີ້ ແມ່ນໄດ້ລົງສຳຫລວດຄົວເຮືອນທີ່ອາໃສຢູ່ໃນຕົວເມືອງປາກເຊ ກ່ຽວກັບຄວາມພໍໃຈຈ່າຍໃນການກຳຈັດຂີ້ເຫຍື່ອໂດຍເລັງໃສ່ 1) ສຶກສາຄວາມເຕັມໃຈຈ່າຍ ໃນການກຳຈັດຂີ້ເຫຍື່ອ ຂອງປະຊາຊົນທີ່ຢູ່ອາໃສພາຍໃນເມືອງ ປາກເຊ; 2) ສຶກສາປັດໄຈທີ່ມີຜົນຕໍ່ກັບການຕັດສິນໃຈຈ່າຍ ຂອງ ປະຊາຊົນ ທີ່ຢູ່ອາໃສພາຍໃນເມືອງ ປາກເຊ ແລະ 3) ສຶກສາບັນຫາ ອຸປະສັກ ໃນການກຳຈັດ ຂີ້ເຫຍື່ອ ຂອງປະຊາຊົນທີ່ຢູ່ອາໃສພາຍໃນເມືອງ ປາກເຊ. ໃນການສຶກສາ ໄດ້ນຳໃຊ້ກຸ່ມຕົວຢ່າງທັງ 712 ຄົວເຮືອນ ໂດຍໃຊ້ Logit model ແລະ Full model analysis ໃນການວິເຄາະຂໍ້ມູນ. ຜົນການສຶກສາພົບວ່າ ຄວາມພໍໃຈຈ່າຍ (WTP) ໃນການກຳຈັດ ຂີ້ເຫຍື່ອຂອງ ຄົວເຮືອນທີ່ອາໃສຢູ່ໃນຕົວເມືອງ ປາກເຊ ມີປະມານ 82,442 ກີບ/ຄົວເຮືອນ (USD10.18); ປັດໄຈທີ່ກຳນົດ WTP ປະກອບມີ ລາຄາບິດ, ລາຍໄດ້ຂອງຄົວເຮືອນ ໃນລະດັບຄວາມສຳຄັນທາງສະຖິຕິ 1% ແລະ ເພດຂອງຜູ້ຕອບແບບສອບຖາມແມ່ນມີຄວາມສຳພັນທາງສະຖິຕິໃນລະດັບ 10% ແລະ ສ່ວນທີ່ເປັນບັນຫາ ອຸປະສັກ ໃນການກຳຈັດຂີ້ເຫຍື່ອຄື ບໍ່ມີສະຖານທີ່ຖິ້ມ (ຮອງຮັບຊົ່ວຄາວ) ຂີ້ເຫຍື່ອພາຍໃນບ້ານ ຫລື ຊຸມຊົນ, ມີແຮງງານບໍ່ພໍທີ່ຈະມາຖອກ ຫລື ເອົາຂີ້ເຫຍື່ອໃນກະຕ່າໄປຖິ້ມ ແລະ ບໍ່ມີພາຫານະໃນການກຳຈັດຂີ້ເຫຍື່ອ ຕາມລຳດັບ.

**ຄຳສັບ:** ຄວາມພໍໃຈຈ່າຍ, ຂີ້ເຫຍື່ອ

## Abstract

This study is to survey households' willingness to pay for improving rubbish management in Pakxe City, Champasak Province, Laos. The purpose of the study are: 1) How much people are willing to pay for improving rubbish management; 2) What factors determine the households' willingness to pay and 3) What the main problem of households to manage their rubbish. With 712 households were interviewed as well as logit and full model analysis were used. The result finding that people are willing to pay for improving rubbish management is approximately 82,442 kip/household/month (USD 10.18). The factors determine WTP are bid price, income and gender, those are statically significant at 1% and 10% confident level.

---

1 ຫ້ອງການ ຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈຳປະສັກ Tel: (+856) 2055338813
Email: Syamphone. igges@gmail.com

2 ຫ້ອງການ ວິຊາການ ມະຫາວິທະຍາໄລ ຈຳປະສັກ

3 ຄະນະເສດຖະສາດ ມະຫາວິທະຍາໄລ ຈຳປະສັກ

4 ຄະນະເສດຖະສາດ ມະຫາວິທະຍາໄລ ຈຳປະສັກ

Therefore, the main problems for rubbish management are no space within villages for stationing rubbish, lack of labors to collect rubbish in Tangs or Baskets and lack of vehicle to transit rubbish to landfill receptively.

**Key word:** Willingness to pay, Rubbish

## ພາກສະເໜີ

ພາຍຫລັງໄດ້ ຮັບການສະຖາປານາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975, ພັກ ແລະ ລັດຖະບານໄດ້ສຸມໃສ່ 2 ຍຸດທະສາດສຳຄັນຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຊິ່ງສາມາດຮັກສາການເຕີບໂຕທາງດ້ານເສດຖະກິດຂະຫຍາຍຕົວໃນລະດັບສະເລ່ຍ 7.5 - 8 ສ່ວນຮ້ອຍຕໍ່ປີ. ມາເຖິງປະຈຸບັນ, ພັກ ແລະ ລັດຖະບານ ພວມກຳລັງຊຸ້ນຂ້ຽວສຸມໃສ່ການພັດທະນາ ເພື່ອນຳປະເທດຊາດຫລຸດພົ້ນອອກຈາກຄວາມທຸກຍາກໃຫ້ຢູ່ໃນລະດັບຕ່ຳກວ່າ 19 ສ່ວນຮ້ອຍ ຂອງປະຊາກອນທັງໝົດ ແລະ ຫລຸດຈຳນວນຄົວເຮືອນທີ່ທຸກຍາກໃຫ້ຕ່ຳກວ່າ 10 ສ່ວນຮ້ອຍ ຂອງຄອບຄົວທຸກຍາກ ແລະ ຫລຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020 (Phadouagdeth el al, 2013). ຄຽງຄູ່ກັບດ້ານດີ ກໍ່ມີດ້ານອ່ອນ ບັນຫາກໍ່ຄື ການເຕີບໂຕຂອງເສດຖະກິດສ່ວນໃຫຍ່ແມ່ນຕິດພັນກັບການຊົມໃຊ້ຊັບພະຍາກອນທຳມະຊາດຢ່າງບໍ່ປະຫຍັດ ເຊິ່ງເປັນຜົນເຮັດໃຫ້ມີການຂຸດຄົ້ນຊັບພະຍາກອນທຳມະຊາດ ເປັນຈຳນວນຫລວງຫລາຍ ແລະ ມີລັກສະນະຊະຊາຍ. ຊັບພະຍາກອນປ່າໄມ້ທຳມະຊາດເປັນຈຳນວນຫລາຍແສນເຮັກຕາຫລຸດລົງໃນແຕ່ລະປີ; ມີແມ່ນ້ຳທີ່ສຳຄັນຫລາຍໆສາຍໄດ້ຖືກຕັນ ແລະ ໄດ້ກາຍເປັນເຂື່ອນໄຟຟ້ານ້ຳຕົກ ແລະ ໄດ້ມີເນື້ອທີ່ດິນເປັນຈຳນວນຫລາຍແສນເຮັກຕາກາຍເປັນພື້ນທີ່ທາງການກະເສດຂະໜາດໃຫຍ່ ເພື່ອການຄ້າ ຫລື ກາຍເປັນເຂດອຸດສາຫະກຳຂຸດຄົ້ນບໍ່ແຮ່ທາດ (Conford, 2009) ເຊິ່ງມັນອາດເປັນສາຍເຫດຕົ້ນຕໍຂອງບັນຫາມົນລະພິດ ແລະ ອາດຈະສົ່ງຜົນເຮັດໃຫ້ສະພາບແວດລ້ອມເຊື່ອມໂຊມ ໃນໄລຍະຍາວໄດ້.

ນອກຈາກບັນຫາທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມທີ່ໄດ້ກ່າວມາຂ້າງເທິງແລ້ວ, ການຂະຫຍາຍເປັນຕົວເມືອງໃຫຍ່ ແລະ ການເພີ່ມຂຶ້ນຂອງປະຊາກອນກໍ່ສູງ ເຊິ່ງມັນກໍ່ເກີດຄວາມແອອັດ ແລະ ການຄວບຄຸມມົນລະພາວະກໍ່ຍາກຂຶ້ນ ໂດຍສະເພາະບັນຫາການຖິ້ມຂີ້ເຫຍື່ອ (ຖົງຢາງພລັດສະຕິກ, ກະປ໋ອງ, ແກ້ວ ແລະ ສິ່ງເສດເຫລືອອື່ນໆ) ຊະຊາຍ. ບັນຫາການຖິ້ມຂີ້ເຫຍື່ອຊະຊາຍ ມັນເກີດຂຶ້ນຢູ່ທຸກຫົນແຫ່ງ ເປັນຕົ້ນແມ່ນ ຕາມກາງບ້ານ, ທົ່ງນາ ແລະ ປ່າແຄມບ້ານ, ແຄມເສັ້ນທາງ ແລະ ຕາມສະຖານທີ່ສາທາລະນະຕ່າງໆ. ອີງຕາມ ບົດສະຫລຸບຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ແຂວງ ຈຳປາສັກ (2015) ໄດ້ຊີ້ໃຫ້ເຫັນວ່າ “ການຖິ້ມຂີ້ເຫຍື່ອຂອງຄົວເຮືອນໂດຍສະເລ່ຍມີປະມານ 0.6 ກິໂລກຣາມຕໍ່ຄົນຕໍ່ວັນ” ໝາຍຄວາມວ່າ ຖ້າຄິດໄລ່ປະລິມານຂີ້ເຫຍື່ອທີ່ມີຢູ່ໃນເມືອງປາກເຊໃນແຕ່ລະວັນມີປະມານ 46 ໂຕນຕໍ່ວັນ. ໃນຈຳນວນນີ້ ໜ່ວຍງານທີ່ກ່ຽວຂ້ອງສາມາດກຳຈັດ ຫລື ທຳລາຍຢູ່ສະຖານີຖິ້ມຂີ້ເຫຍື່ອໄດ້ປະມານ 27.61 ໂຕນ, ສ່ວນທີ່ເຫລືອແມ່ນຕົກເຮ່ຍຢູ່ຕາມສະຖານທີ່ຕ່າງໆ. ຂີ້ເຫຍື່ອເລົ່ານີ້, ນອກຈາກຈະສ້າງບັນຫາມົນລະພາວະ, ແຫລ່ງແຜ່ພັນຂອງເຊື້ອພະຍາດຕ່າງໆ ແລະ ເຮັດໃຫ້ສະພາບແວດລ້ອມເຊື່ອມໂຊມລົງແລ້ວ ມັນຍັງເປັນສິ່ງບໍ່ງາມຕາທີ່ແຂກບ້ານແຂກເມືອງພົບເຫັນອີກດ້ວຍ. ໃນປະຈຸບັນ ບ້ານເມືອງເຮົາກຳລັງຖືກຈັດອັນດັບໃຫ້ເປັນເມືອງທີ່ໜ້າທ່ຽວທີ່ສຸດໃນໂລກ ແລະ ກາຍມາເປັນທີ່ໜ້າສົນໃຈຂອງຊາວໂລກ. ສຳລັບການທ່ອງທ່ຽວແລ້ວ, ຄວາມສະອາດສວຍງາມຖືວ່າເປັນເລື່ອງ ຈຳເປັນ ແລະ ສຳຄັນທີ່ສຸດ. ດ້ວຍເຫດນັ້ນ, ບັນຫາສິ່ງແວດລ້ອມ ຫລື ບັນຫາຂີ້ເຫຍື່ອລົ້ນເມືອງ ກຳລັງເປັນບັນຫາພົ້ນເດັ່ນໃນສັງຄົມລາວໂດຍສະເພາະ ຕາມຕົວເມືອງໃຫຍ່ ບ່ອນທີ່ມີເສດຖະກິດຂະຫຍາຍໂຕດີແມ່ນເປັນປະເດັນທີ່ ສັງຄົມໃຫ້ຄວາມສົນໃຈ ແລະ ຖົກຖຽງກັນມາຕະຫລອດ. ການມ້ຽນມັດ ຫລື ແມ່ນແຕ່ສະຖານທີ່

ຖິ້ມຂີ້ເຫຍື່ອ ກໍ່ແມ່ນມີການຈັດສັນໄວ້ຢ່າງເປັນລະບົບ. ໃນແຕ່ລະວັນກໍ່ມີລົດບັນທຸກ ແລະ ຄົນງານຈຳນວນໜຶ່ງເລາະເກັບຂີ້ເຫຍື່ອຕາມແຕ່ລະບ້ານ ຕາມເຂດຮັບຜິດຊອບຂອງຕົນ.

ສະພາບການເກັບຂີ້ເຫຍື່ອພາຍໃນ ເມືອງປາກເຊແມ່ນ ໄດ້ມີການດຳເນີນການແບ່ງອອກເປັນເຂດຮັບຜິດຊອບຂອງໃຜລາວເຊິ່ງປະກອບມີ ລັດ (ອພບຕ) ແລະ ບໍລິສັດເອກະຊົນຈຳນວນໜຶ່ງເລາະເກັບຕາມເຂດຮັບຜິດຊອບຂອງຕົນ ປະມານ ອາທິດລະຄັ້ງ ແລະ ປະຊາຊົນ (ຊາວບ້ານ) ແມ່ນໄດ້ປະກອບສ່ວນເສຍເງິນລາຍເດືອນໃຫ້ກັບອົງການທີ່ກ່ຽວຂ້ອງເປັນປະຈຳ. ແຕ່ເຖິງຢ່າງໃດກໍ່ຕາມ, ການເລາະເກັບອາທິດລະຄັ້ງແມ່ນຍັງບໍ່ພຽງພໍກັບປະລິມານຂີ້ເຫຍື່ອທີ່ປະຊາຊົນຕ້ອງການຖິ້ມ, ຮ້າຍແຮງໄປກວ່ານັ້ນ ບາງອາທິດກໍ່ບໍ່ມີລົດມາເກັບ ເຮັດໃຫ້ຂີ້ເຫຍື່ອທີ່ຊາວບ້ານເອົາມາລໍຖ້າລົດນັ້ນ ເລີ່ມເນົ່າເປື່ອຍ ສິ່ງກິ່ນເໝັນໄປທົ່ວໝູ່ບ້ານ ແລະ ມີແມງວັນເປັນແສນຕົວຮ້າຍກວ່າມີສັດຕາຍໃນກາງປ່າ ຍິ່ງໄປກວ່ານັ້ນ, ບາງຄັ້ງກໍ່ມີສັດລ້ຽງພາຍໃນໝູ່ບ້ານ ໄດ້ໄປທຳລາຍຖົງຢາງ ຫລື ກະຕ່າຂີ້ເຫຍື່ອດັ່ງກ່າວ ຍິ່ງເຮັດໃຫ້ບັນຫາເພີ່ມທະວີຂຶ້ນ. ບັນຫາຂີ້ເຫຍື່ອແມ່ນຍັງບໍ່ຈົບ ການທີ່ຊາວບ້ານບໍ່ໃຫ້ຄວາມຮ່ວມມື ບໍ່ມີກະຕ່າຂີ້ເຫຍື່ອພາຍໃນບ້ານ, ບໍ່ມີການເກັບມ້ຽນ ຖິ້ມຊະຊາຍ ຕະຫລອດເຖິງ ຈູດເຜົາຕາມບ້ານ. ສຳລັບ ອພບຕ ເອງ ກໍ່ມີຂີດຈຳກັດຫລາຍດ້ານໃນການປະຕິບັດໜ້າທີ່ເຊັ່ນ: ຂີດຈຳກັດດ້ານງົບປະມານ, ຂີດຈຳກັດດ້ານຍານພາຫານະ ແລະ ຂີດຈຳກັດດ້ານຈຳນວນແຮງງານ ເພາະຄົນງານສ່ວນໃຫຍ່ເປັນແຮງງານຕາມລະດູການ. ຄຳຖາມຕາມມາກໍ່ຄື: ໃຜຈະເປັນຜູ້ຮັບຜິດຊອບກັບບັນຫາຂີ້ເຫຍື່ອລົ້ນເມືອງ? ແລະ ຖ້າຈະກຳຈັດຂີ້ເຫຍື່ອດັ່ງກ່າວມັນຈະຮຽກຮ້ອງຕ້ອງການເງິນທຶນຫລາຍປານໃດ?

**ຄວາມສຳຄັນຂອງການສຶກສາ (Significance of the study)**

ໃນເມື່ອກ່ອນບ້ານເມືອງຂອງພວກເຮົາແມ່ນຍັງບໍ່ທັນມີບັນຫາຮ້າຍແຮງເລື່ອງຂີ້ເຫຍື່ອເທື່ອ ບັນດາຄົວເຮືອນ ແລະ ສຳນັກງານອົງການຕ່າງໆ ກຳຈັດຂີ້ເຫຍື່ອດ້ວຍວິທີການຈູດ, ຂຸດຝັງຕາມສະຖານທີ່ຕ່າງໆ ພາຍໃນຂອບເຂດບ້ານເຮືອນຂອງຕົນ ຕໍ່ມາບ້ານເມືອງມີການພັດທະນາ ແລະ ການຫັນເປັນອຸດສາຫະກຳທັນສະໄໝຫລາຍຂຶ້ນ ໃນຂະນະດຽວກັນ ປະຊາຊົນກໍ່ມີຊີວິດການເປັນຢູ່ດີຂຶ້ນ ມີຄວາມສະດວກສະບາຍຫລາຍຂຶ້ນ ໂດຍສະເພາະການບໍລິໂພກ ການຊົມໃຊ້ແມ່ນດີລື່ນເກົ່າຫລາຍ ແຕ່ເຖິງຢ່າງໃດກໍ່ຕາມ ການກຳຈັດສິ່ງເສດເຫລືອແບບເກົ່າແມ່ນບໍ່ສາມາດເຮັດໄດ້ ແລະ ການກຳຈັດໃນປະຈຸບັນນີ້ຍັງບໍ່ເປັນໄປຕາມລະບົບທີ່ທາງການວາງໄວ້ເທື່ອ ສິ່ງທີ່ໜ້າເປັນຫ່ວງກໍ່ຄື ຜູ້ບໍລິໂພກທັງຫລາຍຍັງຮູ້ເທົ່າບໍ່ເຖິງການເຖິງໄພອັນຕະລາຍທີ່ອາດຈະເກີດຂຶ້ນຈາກບັນຫາສິ່ງເສດເຫລືອ ປະກົດການທີ່ພົ້ນເດັ່ນໃນສັງຄົມທົ່ວໄປກໍ່ຄື ການຈູດເຜົາຕາມກາງບ້ານ, ການຖິ້ມຂີ້ເຫຍື່ອສະຊາຍຕາມສະຖານທີ່ທ່ອງທ່ຽວ ແລະ ສະຖານທີ່ສະທາລະນະ ຜົນຕາມມາກໍ່ຄື ເກີດມົນລະພາວະພາຍໃນໝູ່ບ້ານ. ຍິ່ງໄປກວ່ານັ້ນ, ຂີ້ເຫຍື່ອທີ່ຖິ້ມລົງພື້ນອາດເປັນພາຫານະນຳເຊື້ອໂຣກທີ່ຮ້າຍແຮງມາສູ່ຊຸມຊົນກໍ່ເປັນໄດ້. ສະເພາະສະຖານທີ່ພັກຜ່ອນຢ່ອນໃຈ, ຂີ້ເຫຍື່ອອາດຈະສ້າງບັນຍາກາດທີ່ບໍ່ດີ ແລະ ສິ່ງກິ່ນທີ່ບໍ່ເພິ່ງປາດຖະໜາ ພາຍໃນສະຖານທີ່ທ່ອງທ່ຽວ ບັນຫາທີ່ເກີດຂຶ້ນນອກຈາກຈະມີຜົນຕໍ່ພາບພົດຂອງປະເທດແລ້ວມັນຍັງຈະສົ່ງຜົນກະທົບທາງລົບຕໍ່ທຸລະກິດການທ່ອງທ່ຽວອີກດ້ວຍ. ໃນການສຶກສາຄົ້ນຄວ້າຄັ້ງນີ້ ນັກຄົ້ນຄວ້າຂອງພວກເຮົາ ແມ່ນໄດ້ແລເຫັນບັນຫາສິ່ງແວດລ້ອມ ທີ່ເກີດຂຶ້ນຈິງໃນສັງຄົມລາວ. ຫວັງຢ່າງຍິ່ງວ່າຜົນການຄົ້ນຄວ້າຈະເປັນປະໂຫຍດ

ຫລາຍທີ່ສຸດ ແລະ ເປັນແນວທາງນຳໄປສູ່ການແກ້ໄຂບັນຫາໃນໄລຍະຍາວ ໃຫ້ແກ່ຊຸມຊົນຕ່າງໆ ທີ່ຂຶ້ນກັບເມືອງປາກເຊ ໂດຍສະເພາະແມ່ນ ຫ້ອງວ່າການປົກຄອງເມືອງປາກເຊ, ອົງການພັດທະນາຕົວເມືອງ (ອພບຕ) ຕະຫລອດເຖິງມະຫາວິທະຍາໄລ ຈຳປາສັກ ເຊິ່ງເປັນສະຖາບັນການສຶກສາ ມີໜ້າທີ່ຫລັກໃນສຶກສາອົບຮົມລູກຫລານໃນການປົກປັກຮັກສາສິ່ງແວດລ້ອມ, ຮັກສາວັດທະນະທຳ ແລະ ຮີດຄອງປະເພນີ ຕະຫລອດເຖິງຮຽນຮູ້ແນວທາງຂອງ ພັກ ແລະ ລັດຖະບານ.

ໃນໄລຍະຜ່ານມາ, ໄດ້ມີນັກຄົ້ນຄວ້າຫລາຍໆທ່ານໄດ້ທຳການຄົ້ນຄວ້າເຊັ່ນ: Muhammad Subhan et al (2014) ໄດ້ສຶກສາກ່ຽວກັບ ຄວາມເຕັມໃຈຈ່າຍຂອງຊຸມຊົນ ເພື່ອປັບປຸງການບໍລິຫານຂີ້ເຫຍື່ອຢູ່ປະເທດ ມາເລເຊຍ;

Kwabena Nyarko Addai and Gideon Danso-Ableam (2014) ໄດ້ສຶກສາກ່ຽວກັບ ປັດໄຈທີ່ກຳນົດຄວາມພໍໃຈຈ່າຍ ເພື່ອປັບປຸງການບໍລິຫານຂີ້ເຫຍື່ອຢູ່ທີ່ເມືອງ Dunkwa-on-Offin (2014) ປະເທດການາ; Aggrey Niringiye and Douglason Omortor G. (2010) ໄດ້ສຶກສາກ່ຽວ ປັດໄຈທີ່ກຳນົດຄວາມພໍໃຈຈ່າຍ ເພື່ອປັບປຸງການບໍລິຫານຂີ້ເຫຍື່ອ ຢູ່ທີ່ເມືອງ Kampala City, ປະເທດ Uganda; ແລະ MIR ANJUM ALTAF and J. R. DESHAZO (1996) ໄດ້ສຶກສາກ່ຽວກັບ ຄວາມຕ້ອງການຂອງຄົວເຮືອນໃນການປັບປຸງການບໍລິຫານຂີ້ເຫຍື່ອ ກໍລະນີສຶກສາຢູ່ເມືອງກຸຣັນວາລາ ປະເທດປາກິດສະຖານ; ເຖິງຢ່າງໃດກໍ່ຕາມ, ຢູ່ ສປປ ລາວເຮົາຍັງບໍ່ແນ່ໃຈວ່າ ມີນັກຄົ້ນຄວ້າທ່ານໃດໄດ້ສຶກສາກ່ຽວກັບຄວາມພໍໃຈຈ່າຍໃນການກຳຈັດ ຫລື ບໍລິຫານຈັດການຂີ້ເຫຍື່ອເທື່ອ ເພາະລະບົບຂໍ້ມູນຂ່າວສານຍັງມີລັກສະນະຈຳກັດຢູ່. ແຕ່ເຖິງຢ່າງໃດກໍ່ດີ, ຜົນການຄົ້ນຄວ້າຄັ້ງນີ້ອາດເປັນຂໍ້ມູນພື້ນຖານໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ແລະ ນຳໄປສູ່ການແກ້ໄຂບັນຫາການຖິ້ມຂີ້ເຫຍື່ອລົ້ນເມືອງຂອງ ເມືອງ ປາກເຊ ຫລື ເມືອງ ອື່ນໆ ກໍ່ເປັນໄດ້.

**ຈຸດປະສົງ**

1. ເພື່ອສຶກສາຄວາມເຕັມໃຈຈ່າຍ ໃນການກຳຈັດຂີ້ເຫຍື່ອ ຂອງປະຊາຊົນທີ່ຢູ່ອາໃສພາຍໃນເມືອງ ປາກເຊ
2. ເພື່ອສຶກສາປັດໄຈທີ່ມີຜົນຕໍ່ກັບການຕັດສິນໃຈຈ່າຍ ຂອງປະຊາຊົນທີ່ຢູ່ອາໃສພາຍໃນເມືອງ ປາກເຊ
3. ເພື່ອສຶກສາບັນຫາ ອຸປະສັກ ໃນການກຳຈັດຂີ້ເຫຍື່ອຂອງປະຊາຊົນທີ່ຢູ່ອາໃສພາຍໃນເມືອງ ປາກເຊ

**ວິທີການສຶກສາ (Methods)**

3.1 ເຄື່ອງມືທີ່ໃຊ້ເຂົ້າໃນການສຶກສາ

ໃນການສຶກສາຄັ້ງນີ້ ແມ່ນເນັ້ນໃສ່ວິທີທາງເສດຖະສາດດ້ານການປະເມີນມູນຄ່າຄວາມເຕັມໃຈທີ່ຈະຈ່າຍ (CVM) ໃນການກຳຈັດຂີ້ເຫຍື່ອ ຂອງຊາວ ເມືອງ ປາກເຊ ແຂວງ ຈຳປາສັກ ໂດຍໃຊ້ວິທີການປະເມີນມູນຄ່າສິ່ງແວດລ້ອມທີ່ອາດເກີດຂຶ້ນຈິງ ດ້ວຍວິທີການສົມມຸດເຫດການໃຫ້ໃກ້ຄຽງກັບຄວາມເປັນຈິງ ແລະ ປະເມີນທີ່ມີລັກສະນະຄຳຖາມປິດ ແລະ ໃຊ້ແບບຈຳລອງ logit model ໃນການຊອກຫາຄ່າພາລາແມັດເຕີຂອງ $\alpha$ ແລະ $\beta$ ເພື່ອຊອກຫາຄ່າ Median. ໃຊ້ full model analysis ເພື່ອຊອກຫາປັດໄຈທີ່ມີອິດທິພົນຕໍ່ມູນຄ່າຄວາມເຕັມໃຈຈ່າຍຂອງປະຊາຊົນໃນການກຳຈັດຂີ້ເຫຍື່ອດັ່ງນີ້:

1. ແບບຈຳລອງ Logit Model

$$\Pr o(yes = 1) = \alpha + \beta_1 Bid \quad (1)$$

2. ແບບຈຳລອງ Full Model Analysis

$$\Pr o(yes = 1) = \alpha + \beta_1 Bid + \beta_2 Gen. + \beta_3 Age + \beta_4 Oc + \beta_5 Fs + \beta_6 Inc + \beta_7 Cog + \varepsilon \quad (2)$$

ຕາຕະລາງ 1 ອະທິບາຍຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະ

| ຕົວປ່ຽນຕາມ | ນິຍາມຂອງຕົວປ່ຽນ | ຫົວໜ່ວຍ |
|---|---|---|
| ຕົວປ່ຽນຕາມ | | |
| WTP | ຄວາມເຕັມໃຈທີ່ຈະຈ່າຍຂອງຄົວເຮືອນໃນການກຳຈັດຂີ້ເຫຍື້ອ | ເຕັມໃຈຈ່າຍ= 1; ອື່ນໆ = 0 |
| ຕົວປ່ຽນອິດສະຫລະ | | |
| Gen. | ເພດຂອງຫົວໜ້າຄົວເຮືອນ | ເພດຊາຍ = 1; ອື່ນໆ=0 |
| Age | ອາຍຸຂອງຫົວໜ້າຄົວເຮືອນ | ປີ |
| Oc | ອາຊີບ | ພະນັກງານ= 1; ອື່ນໆ=0 |
| Fs | ຈຳນວນຄົນໃນຄອບຄົວ | ຄົນ |
| Inc | ລາຍໄດ້ຕໍ່ເດືອນ | ກີບ |
| Cog | ການຮັບຮູ້ຂໍ້ມູນຂ່າວສານຕ່າງໆ | ຮັບຮູ້= 1; ອື່ນໆ=0 |

3.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ກຸ່ມປະຊາກອນໃນເຂດ ເມືອງປາກເຊ ມີຈຳນວນທັງໝົດ 12,800 ຄອບຄົວ ຫລື ມີປະຊາກອນທັງໝົດປະມານ 77,331 ຄົນ. ໃນການສຶກສາຄັ້ງນີ້ ຈະໄດ້ນຳໃຊ້ກຸ່ມຕົວຢ່າງ ປະມານ 712 ຄົວເຮືອນ ເຊິ່ງນອນໃນ 5 ກຸ່ມບ້ານ. ການສຳພາດແມ່ນໃຊ້ລາຍບຸກຄົນຢ່າງສຳພາດ (Face-to-face interview) ແຕ່ລະຄົວເຮືອນ,ໜຶ່ງຄົນເປັນຕົວແທນໃຫ້ໜຶ່ງຄົວເຮືອນ ແລະ ຕ້ອງເປັນຫົວໜ້າຄອບຄົວ ຫລື ບຸກຄົນທີ່ມີອາຍຸສູງເກີນ 18 ປີຂຶ້ນໄປ.

## ຜົນການຄົ້ນຄວ້າ ແລະ ວິພາກບົດ (Results and Discussions)

ຜົນການຄົ້ນຄວ້າ

1. ຄວາມເຕັມໃຈຈ່າຍ (WTP)

ຜົນການວິເຄາະຂໍ້ມູນພົບວ່າ: ການຄາດປະມານຄ່າດ້ວຍ Logit model ເພື່ອຄຳນວນຫາຄ່າ *Alpha* ແລະ *Beta* parameters ດ້ວຍລະດັບຄວາມສຳຄັນທາງສະຖິຕິໃນລະດັບ 1%, ໄດ້ມູນຄ່າຄວາມພໍໃຈຈ່າຍ (WTP) ປະມານ 82,442 ກີບ/ຄົວເຮືອນ/ເດືອນ (USD10.18) ແລະ ມູນຄ່າຄວາມພໍໃຈຈ່າຍລວມ (Total WTP) ໃນການກຳຈັດຂີ້ເຫຍື້ອໄດ້ທັງໝົດປະມານ 1,055,257,600 ກີບ/ເດືອນ (82,442*12,800 ຄອບຄົວ).

ຕາຕະລາງ 2: ຜົນການວິເຄາະດ້ວຍ Logit model

| Parameter | Coefficient | St-Error | P-value |
|---|---|---|---|
| Alpha | 2.209437*** | 0.5168833 | 0.000 |
| Beta | -0.0000268*** | -0.0000268 | 0.000 |
| Number of obs = | 712 | | |
| LR chi2 (12) = | 238.34 | | |
| Prob > chi2 = | 0.00 | | |
| Pseudo R2 = | 0.25 | | |

| | |
|---|---|
| Log likelihood = | -362.78 |

**** ລະດັບຄວາມສຳຄັນ 1%*

2. ການວິເຄາະດ້ວຍ Full Model Analysis

ຜົນຈາກການຄາດປະມານດ້ວຍແບບຈຳລອງ Full Model Analysis ພົບວ່າ ປັດໄຈທີ່ກຳນົດຄວາມພໍໃຈຈ່າຍໃນການກຳຈັດຂີ້ເຫຍື່ອຄື ບິດ (Bid price) ໃນລະດັບຄວາມສຳຄັນທາງສະຖິຕິ 1 %, ມີຄ່າເປັນລົບ ໝາຍຄວາມວ່າ ເມື່ອເຮົາເພີ່ມລາຄາບິດຂຶ້ນຈະສົ່ງຜົນເຮັດໃຫ້ຜູ້ຕອບແບບສອບຖາມຕອບວ່າ ພໍໃຈຈ່າຍ ຫລຸດລົງ; ເພດຂອງຜູ້ຕອບແບບສອບຖາມແມ່ນມີຄວາມສຳພັນທາງສະຖິຕິໃນລະດັບ 10% ມີຄ່າເປັນລົບ ໝາຍຄວາມວ່າ ຜູ້ຕອບແບບສອບຖາມທີ່ເປັນເພດຍິງມີຄວາມພໍໃຈ ຈ່າຍນ້ອຍກວ່າເພດຊາຍ ແລະ ມີຄວາມພໍໃຈຈ່າຍຫລຸດລົງເມື່ອລາຄາບິດເພີ່ມຂຶ້ນ ແລະ ລາຍໄດ້ຕໍ່ເດືອນຂອງຄອບຄົວ ມີການພົວພັນໃນທິດທາງລົບກັບຄວາມພໍໃຈຈ່າຍ ແລະ ມີລະດັບຄວາມສຳຄັນທາງສະຖິຕິໃນລະດັບ 1 % ໝາຍຄວາມວ່າ ເມື່ອລາຍໄດ້ຕໍ່ເດືອນຂອງຄອບຄົວເພີ່ມຂຶ້ນຈະມີໂອກາດທີ່ຈະຈ່າຍນ້ອຍລົງ. ສຳລັບການຮັບຮູ້ຂໍ້ມູນຂ່າວສານຈາກບັນຫາສິ່ງແວດລ້ອມ ມີການພົວພັນໃນທາງບວກກັບຄວາມພໍໃຈຈ່າຍ ແຕ່ບໍ່ມີລະດັບຄວາມສຳພັນໃນທາງສະຖິຕິ.

ຕາຕະລາງ 3 ຜົນການວິເຄາະ Full model analysis

| Variable | Coefficient | St-error | P-value |
|---|---|---|---|
| Constant | 2.209437*** | 0.5168833 | 0.000 |
| Bid | -0.0000268*** | 2.05E-06 | 0.000 |
| Gen. | -0.3791782* | 0.2057257 | 0.065 |
| Age | -0.0000537 | 0.0077545 | 0.994 |
| Oc | -0.2485354 | 0.3507856 | 0.479 |
| Fs | 0.0189891 | 0.0436903 | 0.664 |
| Inc | -0.000000057*** | 0.0000000214 | 0.008 |
| Cog | 0.267451 | 0.2299377 | 0.245 |
| Number of obs = | 712 | | |
| LR chi2(12) = | 254.98 | | |
| Prob > chi2 = | 0.00 | | |
| Pseudo R2 = | 0.26 | | |
| Log likelihood = | -354.46 | | |

** ລະດັບຄວາມເຊື່ອໝັ້ນ 10%, *** ລະດັບຄວາມເຊື່ອໝັ້ນ 1%*

3. ບັນຫາອຸປະສັກໃນການກຳຈັດຂີ້ເຫຍື່ອ

ສະແດງໃຫ້ເຫັນວ່າ ສິ່ງທີ່ເປັນບັນຫາ ອຸປະສັກທີ່ສຳຄັນທີ່ສຸດໃນການກຳຈັດຂີ້ເຫຍື່ອ ຂອງປະຊາຊົນໃນເຂດເທດສະບານ ເມືອງ ປາກເຊ ແຂວງ ຈຳປາສັກ ກໍ່ຄື ບໍ່ມີສະຖານທີ່ຖິ້ມຂີ້ເຫຍື່ອພາຍໃນບ້ານທີ່ຈະໃຫ້ປະຊາຊົນແຕ່ລະຄົວເຮືອນນຳຂີ້ເຫຍື່ອໄປຖິ້ມ ມີຈຳນວນ 364 ເທື່ອຄົນ ກວມເອົາ 13.21 ສ່ວນຮ້ອຍ, ຮອງລົງມາແມ່ນແຮງງານທີ່ຈະມາ

ຖອກຂີ້ເຫຍື້ອບໍ່ພຽງພໍ ເທົ່າກັບ 322 ເທື່ອຄົນ ເທົ່າກັບ 11.68 ສ່ວນຮ້ອຍ, ຂາດທຶນຮອນ ແລະ ພາຫານະໃນການກຳຈັດຂີ້ເຫຍື້ອ ເທົ່າກັບ 317 ເທື່ອຄົນ ເທົ່າກັບ 11.50 ສ່ວນຮ້ອຍ ຂອງຈຳນວນການຕອບແບບສອບຖາມທັງໝົດ. ນອກຈາກນີ້ແລ້ວ, ຍັງມີບັນຫາກ່ຽວກັບຖັງໃສ່ຂີ້ເຫຍື່ອໃນຄົວເຮືອນບໍ່ພຽງພໍການໃຫ້ຄວາມຮ່ວມມືຂອງບ້ານໃກ້ຄຽງໃນການກຳຈັດຂີ້ເຫຍື່ອມີໜ້ອຍ, ໜ່ວຍງານທີ່ລົງມາເຜີຍແຜ່ຄວາມຮູ້ກ່ຽວກັບການກຳຈັດຂີ້ເຫຍື່ອພາຍໃນບ້ານຍັງບໍ່ພຽງພໍ, ກົດລະບຽບຂອງບ້ານທີ່ຫ້າມບໍ່ໃຫ້ມີການຈູດຂີ້ເຫຍື່ອພາຍໃນບ້ານ, ຄ່າທຳນຽມໃນການໃຊ້ບໍລິການເກັບຂີ້ເຫຍື່ອສູງເກີນໄປ , ວິທີການໃນການກຳຈັດຂີ້ເຫຍື່ອທີ່ທາງການກຳນົດໃຫ້ຍັງບໍ່ທັນພຽງພໍ ແລະ ຄວາມເຂົ້າໃຈຂອງຜູ້ພັກອາໄສຮ່ວມກັນຍັງບໍ່ຄຳນຶງເຖິງບັນຫາຂີ້ເຫຍື່ອ ແລະ ບັນຫາສິ່ງແວດລ້ອມ ຮອງລົງມາຕາມລຳດັບ.

ຕາຕະລາງ 4 ບັນຫາ ແລະ ອຸປະສັກໃນການກຳຈັດຂີ້ເຫຍື່ອພາຍໃນເມືອງ ປາກເຊ

| ລ/ດ | ບັນຫາ ແລະ ອຸປະສັກ | ຈຳນວນ (ເທື່ອຄົນ) | ສ່ວນຮ້ອຍ (%) |
|---|---|---|---|
| 1 | ກົດລະບຽບຂອງບ້ານທີ່ຫ້າມບໍ່ໃຫ້ມີການຈູດຂີ້ເຫຍື່ອພາຍໃນບ້ານ | 218 | 7.91 |
| 2 | ຄ່າທຳນຽມໃນການໃຊ້ບໍລິການເກັບຂີ້ເຫຍື່ອສູງເກີນໄປ | 200 | 7.26 |
| 3 | ຖັງໃສ່ຂີ້ເຫຍື່ອໃນຄົວເຮືອນບໍ່ພຽງບໍ | 292 | 10.60 |
| 4 | ຂາດທຶນຮອນ ແລະ ພາຫານະໃນການກຳຈັດຂີ້ເຫຍື່ອ | 317 | 11.50 |
| 5 | ບໍ່ມີສະຖານທີ່ສຳລັບຖິ້ມຂີ້ເຫຍື່ອພາຍໃນບ້ານ | 364 | 13.21 |
| 6 | ແຮງງານທີ່ຈະມາຖອກຂີ້ເຫຍື່ອບໍ່ພຽງພໍ | 322 | 11.68 |
| 7 | ຄວາມຮ່ວມມືຂອງບ້ານໃກ້ຄຽງໃນການກຳຈັດຂີ້ເຫຍື່ອມີໜ້ອຍ | 290 | 10.52 |
| 8 | ສະມາຊິກພາຍໃນບ້ານບໍ່ມີຄວາມພ້ອມພຽງກັນໃນການກຳຈັດຂີ້ເຫຍື່ອ | 220 | 7.98 |
| 9 | ຄວາມເຂົ້າໃຈຂອງຜູ້ພັກອາໄສຮ່ວມກັນຍັງບໍ່ຄຳນຶງເຖິງບັນຫາຂີ້ເຫຍື່ອ ແລະ ບັນຫາສິ່ງແວດລ້ອມ | 121 | 4.39 |
| 10 | ໜ່ວຍງານທີ່ລົງມາເຜີຍແຜ່ຄວາມຮູ້ກ່ຽວກັບການກຳຈັດຂີ້ເຫຍື່ອພາຍໃນບ້ານຍັງບໍ່ພຽງພໍ | 225 | 8.16 |
| 11 | ວິທີການກຳຈັດຂີ້ເຫຍື່ອທີ່ທາງການກຳນົດໃຫ້ຍັງບໍ່ທັນພຽງພໍ | 187 | 6.79 |
| | **ລວມ** | **2,756** | **100** |

**ວິພາກບົດ**

ຜົນຂອງການສຶກສາພົບວ່າ ຊຸມຊົນຕ່າງໆ ທີ່ຂຶ້ນກັບຕົວເມືອງ ປາກເຊ ໄດ້ສະແດງໃຫ້ເຫັນວ່າ ພວກເຂົາສະໜັບສະໜູນໃຫ້ມີການປັບປຸງ ແລະ ຍົກລະດັບການບໍລິການຂອງພາກສ່ວນທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ ແລະ ໄດ້ຮັບຜົນສູງຂຶ້ນ ມັນສະແດງອອກຢູ່ບ່ອນວ່າ ຄວາມພໍໃຈຈ່າຍ ໃນການກຳຈັດຂີ້ເຫຍື້ອຂອງຊຸມຊົນໃຫ້ມີຄວາມສະອາດສວຍງາມມີບັນຍາກາດທີ່ດີ ໄດ້ເພີ່ມຂຶ້ນຈາກລາຄາຄ່າບໍລິການປົກກະຕິເຖິງ 5 ເທົ່າ. ຕາມສະພາບຄວາມເປັນຈິງແລ້ວ ອົງການພັດທະນາຕົວເມືອງ (ອພບຕ) ເປັນຜູ້ເຈົ້າພາບຫລັກໃນການຄຸ້ມຄອງ ຮັກສາຄວາມສະອາດສວຍງາມຕາມສະຖານທີ່ສາທາລະ ແລະ ຊຸມຊົນຕ່າງໆ ພາຍໃນຕົວເມືອງປາກເຊ ໂດຍສະເພາະພາຍໃນຈຸດໃຈກາງຂອງ ເມືອງປາກເຊ. ແຕ່ຢ່າງໃດກໍ່ຕາມ ອພບຕ ເອງ ໄດ້ໃຫ້ການບໍລິການຈັດເກັບຂີ້ເຫຍືອພາຍໃນຕົວເມືອງ ມີລັກສະນະ ບໍ່ທົ່ວເຖິງ ແລະ ບໍ່ໄດ້ດີເທົ່າທີ່ຄວນ ຍ້ອນມີກຳລັງຊັບພະຍາກອນຈຳກັດ ເປັນຕົ້ນ ແມ່ນ ດ້ານງົບປະມານ, ດ້ານກຳລັງພົນ ແລະ ພາຫານະຂົນສົ່ງລວມໄປ ເຖິງສະຖານທີ່ຖິ້ມແມ່ນຍັງບໍ່ທັນມີຄວາມພ້ອມ. ຍິ່ງໄປກວ່ານັ້ນ, ອພບຕ ຍັງໃຫ້ການບໍລິການໃນລັກສະນະ

ຂາດທຶນ ແລະ ເກີດບັນຫາໜີ້ສິນ. ກົງກັນຂ້າມສໍາລັບກຸ່ມຜູ້ໃຊ້ບໍລິການເຫັນວ່າ ຍ້ອນຄວາມບໍ່ໂປ່ງໃສ ແລະ ບໍ່ເປັນທໍາ ກ່ຽວກັບການເກັບຄ່າບໍລິການ ຕະຫລອດເຖິງ ການບໍລິການທີ່ລ້າຊ້າ ແລະ ບໍ່ເປັນປົກກະຕິຂອງ ອພບຕ ຈຶ່ງເຮັດໃຫ້ເກີດ ບັນຫາຂີ້ເຫຍື່ອລົ້ນເມືອງ. ສະຫລຸບຄວາມວ່າ, ການແກ້ໄຂບັນຫາຂີ້ເຫຍື່ອ ມັນຈະຕ້ອງປະກອບດ້ວຍ ອພບຕ ແລະ ຊຸມຊົນ ທັງສອງຝ່າຍຈະຕ້ອງໄດ້ນັ່ງປຶກສາຫາລື ກໍານົດນະໂຍບາຍ ແລະ ວາງແຜນຮ່ວມກັນ ລວມໄປເຖິງ ການສ້າງຄວາມເຊື່ອໝັ້ນ ໄວ້ວາງໃຈເຊິ່ງກັນ ແລະ ກັນ.

## ສະຫລຸບຜົນການສຶກສາ

ບັນຫາຂີ້ເຫຍື່ອເກີດຂຶ້ນບໍ່ສະເພາະແຕ່ໃນປະເທດກໍາລັງພັດທະນາ ປະເທດທີ່ພັດທະນາແລ້ວກໍ່ປະເຊີນກັບບັນຫາໃນລັກສະນະດຽວກັນ ຂີ້ເຫຍື່ອ, ນອກຈາກຈະສ້າງຄວາມເປິເປື້ອນຕາມສະຖານທີ່ຕ່າງໆແລ້ວ ມັນຍັງສົ່ງກິ່ນທີ່ໜ້າບໍ່ປະທັບໃຈໃຫ້ກັບຄົນທີ່ເດີນທາງຜ່ານໄປມາ ແລະ ຜູ້ຢູ່ອາໃສອີກດ້ວຍ. ຍິ່ງໄປກວ່ານັ້ນ, ການຖິ້ມຂີ້ເຫຍື່ອສະສົມຈົນກາຍເປັນກອງໃຫຍ່ໆ ມັນອາດຈະກາຍເປັນແຫລ່ງເພາະພັນຍຸງລາຍ, ແມງວັນ ເຊິ່ງອາດເປັນພາຫະນະສໍາຄັນນໍາເອົາພະຍາດຮ້າຍແຮງມາສູ່ຄົນເຮົາໄດ້ ເຖິງຢ່າງໃດກໍ່ດີ ໃນໄລຍະຜ່ານມາໄດ້ມີຫລາຍໆພາກສ່ວນໃຫ້ຄວາມສໍາຄັນ ແລະ ຫັນໜ້າມາແກ້ໄຂບັນຫາຂີ້ເຫຍື່ອຢ່າງຈິ່ງຈັງ. ຈຸດປະສົງຂອງການສຶກສາປະກອບມີ: 1) ເພື່ອສຶກສາຄວາມເຕັມໃຈຈ່າຍ ໃນການກໍາຈັດຂີ້ເຫຍື່ອ ຂອງປະຊາຊົນທີ່ຢູ່ອາໃສພາຍໃນເມືອງ ປາກເຊ; 2) ເພື່ອສຶກສາປັດໄຈທີ່ມີຜົນຕໍ່ກັບການຕັດສິນໃຈຈ່າຍ ຂອງ ປະຊາຊົນ ແລະ 3) ເພື່ອສຶກສາບັນຫາ ຫລື ອຸປະສັກ ໃນການກໍາຈັດ ຂີ້ເຫຍື່ອ. ໃນການສຶກສາ ໄດ້ນໍາໃຊ້ກຸ່ມຕົວຢ່າງທັງ 712 ຄົວເຮືອນທີ່ຕັ້ງຢູ່ໃນເມືອງ ປາກເຊ ແຂວງ ຈໍາປາສັກ; ໃຊ້ Logit model ແລະ Full model analysis. ຜົນການສຶກສາພົບວ່າ ຄວາມພໍໃຈຈ່າຍ (WTP) ໃນການກໍາຈັດ ຂີ້ເຫຍື່ອຂອງ ຄົວເຮືອນທີ່ອາໄສຢູ່ໃນຕົວເມືອງ ປາກເຊ ມີປະມານ 82,442 ກີບ/ຄົວເຮືອນ/ເດືອນ; ສໍາລັບປັດໄຈທີ່ກໍານົດ WTP ປະກອບມີ ລາຄາບິດ, ລາຍໄດ້ຂອງຄົວເຮືອນ ໃນລະດັບຄວາມສໍາຄັນທາງສະຖິຕິ 1% ແລະ ເພດຂອງຜູ້ຕອບແບບສອບຖາມແມ່ນມີຄວາມສໍາພັນທາງສະຖິຕິໃນລະດັບ 10% ແລະ ສ່ວນທີ່ເປັນບັນຫາ ອຸປະສັກ ໃນການກໍາຈັດຂີ້ເຫຍື່ອຄື ບໍ່ມີສະຖານທີ່ຖິ້ມຂີ້ເຫຍື່ອພາຍໃນບ້ານທີ່ຈະໃຫ້ປະຊາຊົນແຕ່ລະຄົວເຮືອນນໍາຂີ້ເຫຍື່ອໄປຖິ້ມ, ບໍ່ມີແຮງງານພຽງພໍທີ່ຈະເອົາຂີ້ເຫຍື່ອໃນກະຕ່າໄປຖິ້ມ ແລະ ບໍ່ມີທຶນຮອນ ບໍ່ມີພາຫານະໃນການກໍາຈັດຂີ້ເຫຍື່ອ ຕາມລໍາດັບ.

## ຄວາມຮູ້ບຸນຄຸນ

ຄວາມສໍາເລັດໃນການຄົ້ນຄວ້າຄັ້ງນີ້ ເກີດຂຶ້ນໄດ້ຍ້ອນໄດ້ຮັບການສະໜັບສະໜູນຈາກ ໂຄງການສ້າງຄວາມເຂັ້ມແຂງ (SHEP), ມະຫາວິທະຍາໄລ ຈໍາປາສັກ ແລະ ນ້ອງນັກສຶກສາເສດຖະສາດປີທີ 4. ນະໂອກາດນີ້, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງມານະທີ່ນີ້ດ້ວຍ.

## References

ນິຕິວັດ ປານສົມບູນ. (1994). ການສຶກສາຄວາມເຕັມໃຈທີ່ຈະຈ່າຍຄ່າຈັດການຂີ້ເຫຍື່ອ ໃນເຂດເທດສະບານ ນະຄອນຊຽງໃໝ່. ມະຫາວິທະຍາໄລ ຊຽງໃໝ່.

ອົງການພັດທະນາ ແລະ ບໍລິຫານຕົວເມືອງ. (2015). ບົດສະຫລຸບການການເຄື່ອນໄຫວວຽກງານປະຈໍາປີຂອງ ອົງການພັດທະນາ ແລະ ບໍລິຫານຕົວເມືອງ. ແຂວງ ຈໍາປາສັກ.

Glover, D. (2006). How to design a research project in environmental economics.

Predo, C. & James, D.(2006). A user manual for benefit cost analysis using Microsoft excel.

Conford, J. (2009). The poor will always be with you: who are the poor and what do they really want? Manna matters, Newsletter of MANNA GUM. http://www.mannagum.org.au/manna_matters/november2009/aid_ and_development.

Dadson, A., Shaibu, I. & Godfred, S. J. (2013). Urban Housegolds' Willingness to Pay for Improved Solid Waste Disposal Services in Kumasi Metropolos, Ghana. Hindawi Publishing Corporation, Vol. 2013, Article ID 659425, 8 pages.

Kwabena, N. A. & Gideon D. (2014). Determinants of Willingness to Pay for Improved Solid Waste Management in Dunkwa-on-Offin, Ghana. Journal of Agriculture and Environmental Sciences, Vol. 3, No. 1, pp. 01-09.

MIR, A. A. & Deshazo, J. R. (1996). Household Demand for Improved Solid Waste Management: A Case Study of Gujranwala, Pakistan. World Development, Vol.24, No. 5, pp. 857-868.

Muhammad, S., Ahmad, B. A. G & Mold, H. R. J. (2014). Unban Community Willingness to Pay for Improved Solid Waste Management in Malaysia Municipality: A choice Modeling Approach. Asia Social Science, Vol. 10, No. 18, 2014.

Tapvong, C. & Kruavan, J. (2003). Water Quality Improvements: A Contingent Valuation Study of The Chao Phraya River

Yaping, D. (2003). The value of improved water quality for recreation in east Lake, Wuhan, China: An application of contingent valuation and travel cost methods.

Vongkhamsan, L. (2002). Environmental Economics, National University of Laos.

Nguyen Thi Hai & Tran Duc Thanh .(2003). Using the travel cost method to evaluate the tourism benefits of Duc Phuong national park".

Kyophilavong, P. (2004). The analysis of Lao Economy~Macroeconomic model approach.

Phadouangdeth, O., Phommason, S., Kyophilavong, P. & Sayvaya, I. (2013). The Impact of Road on Poverty Reduction in Lao PDR. International Journal of Economics and Empirical Research, Vol. 1, No.11, pp.125-134.

Somsakao Phetranon. (2010). Environmental Economics, Kasetsard University.

Sisuphanthong, V. (2011). Difference in awareness on waste water problem among residents: a case study of Vientiane capital.